# ການຈັດການຮຽນ-ການສອນການອ່ານຈັບໃຈຄວາມພາສາອັງກິດໂດຍໃຊ້ເຕັກນິກ CIRC ສຳລັບນັກສຶກສາຄູສາຍພາສາອັງກິດ ປີທີ 3 ລະບົບ 12+4 ວິທະຍາໄລຄູປາກເຊ

*ຄຳເພັດ ພິມມະສອນ[1], ສີຖານ ສຸຂະວົງ[2], ລັດດາພອນ ພະໄຊສິດທິເດດ[3], ບຸນສົງ ສໍແກ້ວມະນີ[4]*

*ພາກວິຊາພາສາຕ່າງປະເທດ, ສາຂາຄູພາສາອັງກິດ, ວິທະຍາໄລຄູປາກເຊ*

**ບົດຄັດຫຍໍ້**

ການຄົ້ນຄວ້າຄັ້ງນີ້ມີຈຸດປະສົງຢູ່ 3 ດ້ານຄື: 1) ສຶກສາປະສິດທິພາບຂອງບົດສອນອ່ານຈັບໃຈຄວາມພາສາອັງກິດໂດຍໃຊ້ເຕັກນິກ CIRC ສຳລັບນັກສຶກສາຄູສາຍພາສາອັງກິດ ປີ3 ລະບົບ 12+4 ວິທະຍາໄລຄູປາກເຊ ຕາມເກນ 80/80, 2) ສຶກສາດັດຊະນີປະສິດທິຜົນ ການອ່ານຈັບໃຈຄວາມພາສາອັງກິດໂດຍໃຊ້ເຕັກນິກ CIRC, 3) ສຶກສາຄວາມເພິ່ງພໍໃຈຂອງນັກຮຽນຕໍ່ກັບການຈັດການຮຽນ - ການສອນອ່ານຈັບໃຈຄວາມພາສາອັງກິດໂດຍໃຊ້ເຕັກນິກ CIRC. ກຸ່ມທົດລອງທີ່ໃຊ້ໃນການຄົ້ນຄວ້າແມ່ນນັກສຶກສາຄູສາຍພາສອັງກິດ ປີ3 ລະບົບ 12+4 ວິທະຍາໄລຄູປາກເຊ ສົກຮຽນ 2021-2022 ຈຳນວນ 1 ຫ້ອງ, ມີນັກຮຽນ 24 ຄົນ, ຍິງ 12 ຄົນ. ເຊິ່ງເລືອກມາດ້ວຍວິທີສຸ່ມແບບເຈາະຈົງ.ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າຄັ້ງນີ້ປະກອບມີ ບົດສອນວິຊາພາສາອັງກິດຈຳນວນ 5 ບົດ, ແບບທົດສອບວັດຜົນສຳເລັດທາງການຮຽນແບບປາລະໄນມີ 4 ຕົວເລືອກ ຈຳນວນ 25 ຂໍ້ ແລະ ແບບສອບຖາມຄວາມເພິ່ງພໍໃຈ ຊະນິດປະເມີນຄ່າ 5 ລະດັບ ຈຳນວນ 20 ຂໍ້, ສະຖິຕິໃຊ້ວິເຄາະຂໍ້ມູນຄື: ເປີເຊັນ, ຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານ.ຜົນການຄົ້ນຄວ້າພົບວ່າ:ບົດສອນອ່ານຈັບໃຈຄວາມພາສາອັງກິດໂດຍໃຊ້ເຕັກນິກ CIRC ສຳລັບນັກສຶກສາຄູສາຍພາສາອັງກິດ ປີ3 ລະບົບ 12+4 ວິທະຍາໄລຄູປາກເຊ ມີຄ່າປະສິດທິພາບ 80.38/83.16 ເຊິ່ງສູງກວ່າເກນທີ່ຕັ້ງໄວ້ຄື 80/80.

ປະສິດທິຜົນ ການອ່ານຈັບໃຈຄວາມພາສາອັງກິດໂດຍໃຊ້ເຕັກນິກ CIRC, ມີຄ່າດັດຊະນີປະສິດທິຜົນການຮຽນຮູ້ໂດຍລວມເທົ່າກັບ 0.66 ນັກຮຽນສ່ວນຫຼາຍແມ່ນມີຄວາມເພິ່ງພໍໃຈຕໍ່ກັບການຈັດການຮຽນ - ການສອນອ່ານຈັບໃຈຄວາມພາສາອັງກິດໂດຍໃຊ້ເຕັກນິກ CIRC ຢູ່ໃນລະດັບຫຼາຍ.

**ຄຳສຳຄັນ**: ການອ່ານຈັດໃຈຄວາມ, CIRC

---

[1] *ນັກສຶກສາປະລິນຍາໂທ ສາຂາ ວິທະຍາສາດການສຶກສາ ຄະນະສຶກສາສາດ ມະຫາວິທະຍາໄລຈັກປາສັກ*

[2] *ມະຫາວິທະຍາໄລແຫ່ງຊາດ*

[3] *ຄະນະສຶກສາສາດ ມະຫາວິທະຍາໄລຈັກປາສັກ*

[4] *ຄະນະສຶກສາສາດ ມະຫາວິທະຍາໄລຈັກປາສັກ*

# The Teaching-Learning English Reading Comprehension by Using CIRC in Year 3 English Teacher Students 12+4 System at Pakse Teacher Training College


## Abstract

The purposes of this study were 1) to study the efficiency of English language reading comprehension lesson plans by using CIRC technique for year 3 English teacher students with the set criteria $E_1/E_2$ = 80/80; 2) to study the index of effectiveness in learning English language reading comprehension by using CIRC; 3) to study the satisfaction of students towards teaching-learning English language reading comprehension by using CIRC technique. The target group of this study consisted of 24-year 3 English teacher students 12+4 systems at Pakse Teacher Training College in the first semester of academic year 2021-2022. The target group was purposively selected. The research instruments for the study were 5 lesson plans, tests for evaluation the learning outcome of the students with 25 items and the set of questionnaires with 20 items for seeking the student's satisfaction. The data were analyzed by descriptive statistics including percentages (%), mean ( $\overline{X}$ ) and standard deviation (S.D).The research findings were as follows: The efficiency of lesson plans for teaching-learning English language reading comprehension by using CIRC technique for year 3 English teacher students was $E_1/E_2$ = 80.38/83.16 which was higher than the set criteria of 80/80.The index of effectiveness in learning English language reading comprehension by using CIRC technique for year 3 English teacher students was E.I = 0.66. The students' satisfaction towards the teaching-learning English language reading comprehension by using CIRC techniques was generally at high level.


Keywords: Reading Comprehension, CIRC

## 1. ພາກສະເໜີ

ພາສາອັງກິດກໍ່ມີບົດບາດສຳຄັນຕໍ່ກັບສັງຄົມໂລກໃນປັດຈຸບັນ ແລະ ອານາຄົດ ເພາະເປັນພາສາກາງໃນການສື່ສານ, ລວມທັງການພັດທະນາຊັບພະຍາກອນມະນຸດໃຫ້ຢູ່ຮ່ວມກັນໃນຖານະປະຊາຄົມໂລກ, ທີ່ພັດທະນາດ້ານເສດຖະກິດ-ສັງຄົມ, ການເມືອງ, ເຕັກໂນໂລຊີ, ພາສາອັງກິດໄດ້ກາຍເປັນພາສາທີ່ສຳຄັນໃນການສື່ສານເພື່ອໃຫ້ເກີດຄວາມຈະເລີນກ້າວໜ້າຂອງປະເທດ, ເພື່ອໃຫ້ມີຄວາມພ້ອມໃນການກ້າວເຂົ້າສູ່ປະຊາຄົມເສດຖະກິດອາຊຽນ (AEC) ໃນປີຕໍ່ໜ້າ. ດັ່ງນັ້ນ, ການຈັດການຮຽນ-ການສອນພາສາອັງກິດຈຶ່ງຕ້ອງມີການປັບປຸງເພື່ອໃຫ້ຜູ້ຮຽນມີຄວາມສາມາດສື່ສານ ໂດຍບໍ່ພຽງແຕ່ມີຄວາມຮູ້, ຄວາມເຂົ້າໃຈໃນຕົວພາສາເທົ່ານັ້ນ ຍັງຕ້ອງຮຽນຮູ້ຄຳສັບ, ໄວຍາກອນ ແລະ ຕ້ອງມີທັກສະໃນການໃຊ້ 4 ດ້ານຄື: ການຟັງ, ການເວົ້າ, ການອ່ານ ແລະ ການຂຽນ. ນອກຈາກນີ້ ປັດຈຸບັນເປັນຍຸກຈະເລີນກ້າວໜ້າທາງດ້ານເຕັກໂນໂລຊີທີ່ຜູ້ຮຽນສາມາດສຶກສາຫາຄວາມຮູ້ເພີ່ມເຕີມດ້ວຍຕົນເອງໄດ້ຕະຫຼອດເວລາທີ່ເປັນການຮຽນຮູ້ຕະຫຼອດຊີວິດ (ປຣະຍົງ ກັ່ນສິດທິ, 2013: 166-167)ການຈັດການຮຽນ-ການສອນພາສາອັງກິດຢູ່ໃນກົດໝາຍວ່າດ້ວຍການສຶກສາ ມາດຕາ 41 ໝວດທີ 1 ຫຼັກສູດການສຶກສາ ໄດ້ລະບຸໄວ້ຢ່າງຈະແຈ້ງວ່າ ສະຖານສຶກສາສາມາດຈັດຕັ້ງການຮຽນ-ການສອນພາສາຕ່າງປະເທດ, ໃນນັ້ນໃຫ້ເອົາພາສາອັງກິດ ເປັນວິຊາບັງຄັບໂດຍເລີ່ມແຕ່ຊັ້ນປະຖົມປີທີ 3 ຂຶ້ນໄປ. ສ່ວນພາສາອື່ນໃຫ້ເລືອກຮຽນ, ເລືອກສອນ ຕາມຄວາມເໝາະສົມ ແລະ ຕາມເງື່ອນໄຂຕົວຈິງຂອງສະຖານສຶກສາ (ກະຊວງສຶກສາທິການ ແລະ ກິລາ, 2016: 19). ການອ່ານເປັນເຄື່ອງມືສຳຄັນໃນການຮຽນຮູ້ ເພາະເປັນທັກສະທີ່ມີບົດບາດໃນການສະແຫວງຫາຄວາມຮູ້ ແລະ ສາມາດນຳໄປເປັນເຄື່ອງມືໃນການຮຽນຮູ້ຕະຫຼອດຊີວິດ ການອ່ານຍັງເຮັດໃຫ້ຜູ້ທີ່ອ່ານມີຄວາມຮູ້, ຄວາມຄິດ, ຄວາມເພີດເພີນ, ມີນິໄສຮັກໃນການອ່ານ ແລະ ມີຄວາມສົນໃຈໃນສິ່ງທີ່ອ່ານສູງ ສາມາດນຳເອົາຄວາມຮູ້ທີ່ໄດ້ຈາກອ່ານໄປນຳໃຊ້ເຂົ້າໃນການເວົ້າ ແລະ ຂຽນໄດ້ຢ່າງມີປະສິດທິພາບ (ບັນທິນີ ທິນນະວົງ, 2011: 1) ການອ່ານມີຄວາມສຳຄັນ ແລະ ຈຳເປັນຢ່າງຍິ່ງໃນສັງຄົມປັດຈຸບັນເພາະນອກຈາກການອ່ານເພື່ອຄວາມເພີດເພີນແລ້ວ ການອ່ານຍັງໄດ້ສະແຫວງຫາຄວາມຮູ້ເພື່ອໃຫ້ທັນເຫດການ ທັງຍັງເພີ່ມພູນສະຕິປັນຍາຂອງຕົນ, ບຸກຄົນທີ່ມີຄວາມເຂົ້າໃຈໃນເລື່ອງທີ່ອ່ານຢ່າງແທ້ຈິງຍ່ອມໄດ້ຮັບຮູ້, ຄວາມຄິດໄປໃຊ້ເກີດປະໂຫຍດແກ່ຕົນ ແລະ ສັງຄົມເປັນຢ່າງດີ. (ສົມເໜາະ ວົງປັນຍາ ແລະ ສີພອນ ສຸນັນທາ, 2010: 1)

ສຳລັບການອ່ານຈັບໃຈຄວາມເປັນທັກສະພື້ນຖານທີ່ຈຳເປັນແກ່ຜູ້ຮຽນພາສາອັງກິດ ຖ້າຫາກນັກຮຽນບໍ່ສາມາດຈັບໃຈຄວາມຈາກເລື່ອງທີ່ອ່ານ ການອ່ານໃນລະດັບສູງກໍ່ເປັນໄປໄດ້ຍາກ ເພາະການອ່ານທຸກຢ່າງຕ້ອງອາໄສ ການອ່ານຈັບໃຈຄວາມເປັນພື້ນຖານ, ການອ່ານຈັບໃຈຄວາມຂອງແຕ່ລະຄົນແມ່ນມີຄວາມແຕກຕ່າງກັນ ບາງຄົນສາມາດອ່ານໄດ້ຢ່າງວ່ອງໄວ, ບາງຄົນອ່ານໄດ້ຊ້າຕອ້ງອາໄສເວລາທຳຄວາມເຂົ້າໃຈກັບເນື້ອເລື່ອງ. ດັ່ງນັ້ນ, ຜູ້ອ່ານຕ້ອງຮຽນຮູ້ເຕັກນິກວິທີການອ່ານຢ່າງຖືກວິທີ ແລະ ເໝາະສົມກັບຜູ້ອ່ານ ເປັນຕົ້ນແມ່ນວິທີການອ່ານຈັບໃຈຄວາມ ເຫັນວ່າ ເປັນວິທີໜຶ່ງທີ່ບັນດານັກວິຊາການຍົກເປັນປະເດັນຂຶ້ນມາເປັນກຳລະນີສຶກສາ ແລະ ເຫັນວ່າ ວິທີດັ່ງກ່າວມີຜະລິດທີ່ຜົນດີຕໍ່ກັບຜູ້ຮຽນ. ດັ່ງທີ່ ພາທິບ ຄິສຸດ (2003: 25) ໄດ້ກ່າວໄວ້ວ່າ ການອ່ານຈັບໃຈຄວາມເປັນທັກສະຈຳເປັນຕໍ່ການສຶກສາຫາຄວາມຮູ້ ພັດທະນາຊີວິດ ນອກຈາກຈະເຮັດໃຫ້ເກີດຄວາມຮູ້ແລ້ວ ຍັງກໍ່ໃຫ້ເກີດຄວາມສະໜຸກສະໜານ, ເພີດເພີນ ແລະ ສິ່ງເສີມໃຫ້ມີແນວຄິດລິເລີ່ມສ້າງສັນໃຫ້ໄດ້ແນວຄິດໃນການດຳລົງຊີວິດ.

ການອ່ານຈັບໃຈຄວາມຈະມີຄວາມສຳຄັນຕໍ່ການຮຽນ ແລະ ຈັດເຂົ້າໃນຫຼັກສູດສາມັນສຶກສາ ແຕ່ໂດຍທົ່ວໄປແລ້ວການອ່ານກໍ່ຍັງມີບັນຫາຄື: ນັກຮຽນບໍ່ມັກອ່ານສິ່ງດັ່ງກ່າວມາຈາກສາເຫດ ປັດຈຸບັນມີສື່ປະເພດຕ່າງໆທີ່ເຮັດໃຫ້ນັກຮຽນສົນໃຈຫຼາຍກ່ວາເຊັ່ນ: ໂທລະທັດ, ຄອມພິວເຕີ, ໂທລະສັບມືຖື ແລະ ອື່ນໆລ້ວນແຕ່ເປັນສື່ທີ່ເຮັດໃຫ້ນັກຮຽນສົນໃຈຫຼາຍກວ່າການອ່ານ, ໃນທີ່ສຸດເຮັດໃຫ້ນັກຮຽນບໍ່ຮັກການອ່ານ, ເສຍໂອກາດທີ່ຈະນຳເອົາຄວາມຮູ້ຈາກການອ່ານໄປພັດທະນາຕົນເອງ ແລະ ສັງຄົມ. ບັນຫາກ່ຽວກັບການອ່ານອັນດັບຕາມມາ ແມ່ນນັກຮຽນບໍ່ໄດ້ຮັບການປູກຝັງນິໄສໃຫ້ຮັກການອ່ານ; ບັນຫາດັ່ງກ່າວນັ້ນ, ອາດມາຈາກສາເຫດຜູ້ປົກຄອງ, ຄູສອນ ຫຼື ຫຼັກສູດການຮຽນ-ການສອນບໍ່ໄດ້ລົງເລິກເລື່ອງການສົ່ງເສີມການອ່ານ (ພັດສະລິ ແຈ່ມຈໍາລຸນ, 2003: 3). ສະນັ້ນ, ເພື່ອພັດທະນາທັກສະພື້ນຖານຂອງການອ່ານ ແລະ ການອ່ານຈັບໃຈຄວາມ, ບັນດານັກວິຊາການ ແລະ ນັກຄົ້ນຄວ້າໄດ້ສຶກສາ ພັດທະນາຮູບແບບກິດຈະກຳ ການຮຽນ-ການສອນເພື່ອພັດທະນາວິທີການສອນ, ສົ່ງເສີມໃຫ້ຜູ້ຮຽນໄດ້ຮຽນຮູ້ເຕັກນິກໃນການອ່ານ, ການທຳຄວາມເຂົ້າໃຈເນື້ອໃນບົດຮຽນດ້ວຍຕົນເອງ, ການມີສ່ວນຮ່ວມໃນການເຮັດກິດຈະກຳຕ່າງໆຂອງການຈັດການຮຽນ-ການສອນໃນທັກສະໃດໜຶ່ງ ສະນັ້ນ, ຜູ້ຄົ້ນຄວ້າ ໄດ້ເຫັນວ່າເຕັກນິກ CIRC (Cooperative Integrated Reading and Composition) ແມ່ນມີຄວາມໜ້າສົນໃຈນຳມາສຶກສາ ເຊິ່ງເປັນຮູບແບບທີ່ໃຊ້ໃນການສອນການອ່ານ ແລະ ຂຽນ ໂດຍສະເພາະ ມີການປະສົມປະສານການຮຽນຮູ້ເປັນກຸ່ມເພື່ອມຸ່ງເນັ້ນການພັດທະນາຜົນການຮຽນໃຫ້ສູງ. (ທິດສະນາ ແຂມມະນີ, 2010: 270), ເນັ້ນໃຫ້ຜູ້ຮຽນໄດ້ພັດທະນາທັກສະການອ່ານໄປພ້ອມໆກັນກັບການເຮັດວຽກເປັນກຸ່ມ, ມີໂອກາດໃຫ້ນັກຮຽນໄດ້ຮຽນຮູ້ເປັນກຸ່ມ, ເປັນຄູ່, ເຮັດໃຫ້ຜູ້ຮຽນມີປະຕິສຳພັນກັນ, ຊ່ວຍເຫຼືອເຊິ່ງກັນ ແລະ ກັນພາຍໃນກຸ່ມ, ເປັນການຮຽນຮູ້ທີ່ຄຳນຶງເຖິງຜູ້ຮຽນເປັນສຳຄັນ. (ພຽງໃຈ ກັນລາ, 2014: 29), ການອ່ານຈັບໃຈຄວາມໝາຍເຖິງການທຳຄວາມເຂົ້າໃຈຈຸດມຸ່ງໝາຍຂອງເລື່ອງທີ່ອ່ານ, ສາມາດແປຄວາມໝາຍ, ຈັບປະເດັນຂອງເລື່ອງທີ່ອ່ານໄດ້, ເຊິ່ງເປັນຂໍ້ເທັດຈິງຫຼືຄວາມຄິດເຫັນຢ່າງໃດໜຶ່ງ ແລ້ວນຳມາເປັນຄວາມເຂົ້າໃຈໃນການອ່ານ ແລະສາມາດນຳໄປຖ່າຍທອດໃຫ້ຜູ້ອື່ນ.

ແຕ່ເຖິງຢ່າງໃດກໍ່ຕາມ, ການຮຽນ-ການສອນພາສາອັງກິດ ພາຍໃນວິທະຍາໄລ ຄູປາກເຊ ກໍ່ຍັງມີຫຼາຍບັນຫາທີ່ທ້າທາຍໃນການຈັດຕັ້ງການຮຽນ-ການສອນ. ອີງຕາມບົດສະຫຼຸບຂອງ (ວິທະຍາໄລ ຄູປາກເຊ, 2020), ພົບວ່າ ການຮຽນ - ການສອນວິຊາ English for specific Purpose ໃນສາຍວິຊາຄູພາສາອັງກິດລະບົບ12+4 ນັກສຶກສາປີທີ 3 ມີຜົນການຮຽນຕໍ່າກວ່າເກນທີ່ກຳນົດໄວ້ໃນພາກຮຽນທີ 1 ແລະ 2 ເຊິ່ງມີຜົນການຮຽນຕໍ່າ, ບັນຫາດັ່ງກ່າວນັ້ນ ອາດເກີດມາຈາກຄວາມຮູ້ພື້ນຖານຂອງນັກສຶກສາທີ່ເຂົ້າມາຮຽນຕໍ່າ, ນັກຮຽນຂາດຄວາມກະຕືລືລົ້ນໃນການຊອກຮູ້ຮໍ່າຮຽນ, ຂາດຄວາມສົນໃຈໃນການຮຽນ, ນັກຮຽນບໍ່ມັກອ່ານບົດຮຽນ. ນອກນັ້ນ ຄູສອນຈຳນວນໜຶ່ງ ແມ່ນຍັງຂາດການນຳໃຊ້ກິດຈະກຳເຂົ້າໃນການຮຽນ-ການສອນ ທີ່ມີຄວາມຫຼາກຫຼາຍ ໂດຍສະເພາະໃນເວລາດຳເນີນກິດຈະກຳການສອນວິຊາການອ່ານສ່ວນໃຫຍ່ ແມ່ນຄູສອນຍັງບໍ່ສາມາດນຳໃຊ້ກິດຈະກຳ ເພື່ອສົ່ງເສີມການອ່ານໄດ້ຢ່າງພຽງພໍ ເປັນເຫດເຮັດໃຫ້ຜູ້ຮຽນຂາດແຮງຈູງໃຈ, ຂາດທັກສະການອ່ານ ແລະ ບໍ່ສາມາດຈັບໃຈຄວາມສຳຄັນຫຼັກ ແລະ ໃຈຄວາມສຳຮອງໄດ້ ເຊິ່ງເປັນຜົນເຮັດໃຫ້ການຮຽນບໍ່ມີປະສິດທິພາບ. (Manida PANGSAPA, 2012), ພົບວ່າ ບັນຫານການອ່ານຂອງນັກຮຽນສ່ວນໃຫຍ່ ແມ່ນບໍ່ຮູ້ຄຳສັບເຕັກນິກ, ບໍ່ຮູ້ຄວາມໝາຍຄຳສັບສະເພາະ, ບໍ່ສາມາດຕີຄວາມໝາຍ

ປະປະໂຫຍກປະສົບຂັ້ນສູງ, ວັກ-ຕອນ ແລະ ຄໍາສັບຕ່າງໆ ໃນເວລາອ່ານ ແຕ່ນັກຮຽນສາມາດແກ້ບັນຫາດ້ວຍການໃຊ້ຍຸດທະວິທີ ດ້ານຄວາມຈື່ຈໍາ ໂດຍການເດົາຮູບພາບ, ໝາຍຄໍາສໍາຄັນ ພ້ອມຊອກຄວາມໝາຍ ໂດຍການເດົາຈາກເນື້ອໃນໃຈຄວາມສໍາຄັນ ຂອງປະໂຫຍກ ຫຼື ວັກຕ່າງໆ ເພື່ອຈັບໃຈຄວາມສໍາຄັນໃນເວລາອ່ານ.

ດັ່ງນັ້ນ, ຜູ້ຄົ້ນຄວ້າໃນຖານະທີ່ເປັນຄູສອນຢູ່ວິທະຍາໄລ ຄູປາກເຊ ຈຶ່ງເຫັນໄດ້ຄວາມສໍາຄັນໃນການສຶກສາຄົ້ນຄວ້າ ເພື່ອຊອກຫາເຕັກນິກ, ວິທີການຕ່າງໆທີ່ເໝາະສົມໃນແກ້ໄຂບັນຫາ ແລະ ພັດທະນາການຮຽນ-ການສອນພາສາອັງກິດ ໃຫ້ໄດ້ຮັບການປັບປຸງດີຂຶ້ນເລື້ອຍໆ ສໍາລັບເຕັກນິກ CIRC ເປັນເຕັກນິກໜຶ່ງ ທີ່ຈະສາມາດຊ່ວຍແກ້ໄຂບັນຫາການອ່ານ ແລະ ອ່ານຈັບໃຈຄວາມໃຫ້ມີປະສິດທິພາບ, ເປັນຂະບວນການປະຕິສໍາພັນລະຫວ່າງບົດອ່ານກັບຜູ້ອ່ານ ເຊິ່ງເຮັດໃຫ້ຜູ້ຮຽນສາມາດຕີຄວາມໝາຍ ແລະ ມີຄວາມເຂົ້າໃຈໃນສິ່ງທີ່ອ່ານຫຼາຍຂຶ້ນ. ພຽງໃຈ ກັນລາ (2014), ສຸຈິດຕຣາ ທັບມະນີ ( 2013), ຊະນິດາ ໄຍບູລີ (2015) ແລະ ໄຊວັດ ສຸທິລັດ (2015), ໄດ້ສຶກສາໂດຍການນໍາໃຊ້ ເຕັກນິກ CIRC ເຂົ້າໃນການສິດສອນທັກສະການອ່ານຈັບໃຈຄວາມ ຜົນການສຶກສາພິສູດໃຫ້ເຫັນວ່າ ການນໍາໃຊ້ເຕັກນິກ CIRC ເຂົ້າໃນການຮຽນ-ການສອນພາສາອັງກິດທັກສະການອ່ານ ແມ່ນມີປະສິທິຜົນແຕກຕ່າງກັນໃນລະດັບຄະແນນສະເລ່ຍກ່ອນ ແລະ ຫຼັງການຮຽນແຕກຕ່າງກັນທາງສະຖິຕິໃນລະດັບ 0.01. ແລະນັກຮຽນມີຄວາມເພິ່ງພໍໃຈຕໍ່ກັບການນໍາໃຊ້ກິດຈະກໍາດັ່ງກ່າວ. ເຖິງຢ່າງໃດກໍ່ຕາມການສຶກສາຜ່ານມາ ແມ່ນເປັນສຶກສາທີ່ຢູ່ຕ່າງປະເທດ ແລະຍັງບໍ່ທັນປະກົດເຫັນຫຼາຍໃນ ສປປ.ລາວເພາະສະນັ້ນ, ນັກຄົ້ນຄວ້າມີຄວາມສົນໃຈນໍາເອົາເຕັກນິກດັ່ງກ່າວເຂົ້າມາທົດສອບກັບນັກສຶກສາ ທີ່ ວິທະຍາໄລ ຄູປາກເຊ ເພື່ອພິສູດວ່າ ມັນມີຄວາມສອດຄ່ອງ ແທດເໝາະຫຼາຍໜ້ອຍພຽງໃດ ກັບສະພາບການຮຽນ-ການສອນ ໃນ ສປປ.ລາວ ໂດຍສະເພາະ ແມ່ນຢູ່ທີ່ ວິທະຍາໄລ ຄູປາກເຊ.

**2. ຈຸດປະສົງຂອງການວິໄຈ**

1) ເພື່ອສຶກສາປະສິດທິພາບຂອງຂະບວນການຮຽນ-ການສອນການອ່ານຈັບໃຈຄວາມພາສາອັງກິດ ໂດຍໃຊ້ເຕັກນິກ CIRC ສໍາລັບນັກສຶກສາຄູສາຍພາສາອັງກິດ ປີ 3 ລະບົບ 12+4 ວິທະຍາໄລຄູປາກເຊ ຕາມເກນ 80/80.

2) ເພື່ອສຶກສາດັດຊະນີປະສິດທິຜົນການຮຽນຮູ້ການອ່ານຈັບໃຈຄວາມພາສາອັງກິດໂດຍໃຊ້ເຕັກນິກ CIRCສໍາລັບນັກສຶກສາຄູສາຍພາສາອັງກິດ ປີ 3 ລະບົບ 12+4 ວິທະຍາໄລຄູປາກເຊ.

3) ເພື່ອສຶກສາຄວາມເພິ່ງພໍໃຈຂອງນັກຮຽນກ່ຽວກັບການອ່ານຈັບໃຈຄວາມພາສາອັງກິດໂດຍໃຊ້ເຕັກນິກ CIRC ສໍາລັບນັກສຶກສາຄູສາຍພາສາອັງກິດ ປີ 3 ລະບົບ 12+4 ວິທະຍາໄລຄູປາກເຊ.

**3. ນິຍາມສັບສະເພາະ**

**ວິທີສອນແບບຮ່ວມມື CIRC** ໝາຍເຖິງ ການຈັດການຮຽນ-ການສອນທີ່ເຮັດໃຫ້ຜູ້ຮຽນໄດ້ຮຽນຮ່ວມມືກັນ ໂດຍແບ່ງນັກຮຽນອອກເປັນກຸ່ມ ແຕ່ລະກຸ່ມມີສະມາຊິກ 4-6 ຄົນ ເຊິ່ງນັກຮຽນມີຄວາມສາມາດໃນການອ່ານແຕກຕ່າງກັນ ມີການຊ່ວຍເຫຼືອເຊິ່ງກັນ ແລະກັນ, ຖ່າຍທອດຄວາມເຂົ້າໃຈໃນການອ່ານ, ມີຄວາມຮັບຜິດຊອບຮ່ວມກັນເພື່ອຄວາມສໍາເລັດຂອງກຸ່ມ. ກິດຈະກໍາການຮຽນ-ການສອນປະກອບດ້ວຍ 5 ຂັ້ນຕອນ ຄື: ຂັ້ນກຽມ, ຂັ້ນສອນ, ຂັ້ນກິດຈະກໍາກຸ່ມ, ຂັ້ນທົດສອບ ແລະ ຂັ້ນປະເມີນ-ມອບລາງວັນ.

**ການອ່ານຈັບໃຈຄວາມ** ໝາຍເຖິງ ການອ່ານພາສາອັງກິດຂອງນັກຮຽນເພື່ອຈັບປະເດັນສໍາຄັນຈາກເລື່ອງທີ່ອ່ານ, ເຂົ້າໃຈຈຸດມຸ່ງໝາຍຂອງເລື່ອງ, ຕອບຄໍາຖາມ, ຕີຄວາມໝາຍ, ສະຫຼຸບໃຈຄວາມຂອງເລື່ອງມາໃຫ້ເປັນຄວາມເຂົ້າໃຈຂອງຜູ້ອ່ານ ແລະ ສາມາດຖ່າຍທອດໃຫ້ກັບຄົນອື່ນໄດ້.

**ວິຊາພາສາອັງກິດ** ໝາຍເຖິງ ພາສາທີ່ໃຊ້ເປັນພາສາທາງການຂອງໂລກເຊິ່ງຈັດເຂົ້າໃນການຮຽນ-ການສອນຢູ່ໃນຫຼັກສູດຄູປະຖົມປີທີ 3 ລະບົບ 12+4 ແລະ ຫຼັກສູດຮຽນພາກບັງຄັບໃນຊັ້ນປະຖົມເຊິ່ງເລີ່ມແຕ່ ປ3.

**ວິທະຍາໄລຄູປາກເຊ** ໝາຍເຖິງ ສະຖາບັນສ້າງຄູທີ່ສັງກັດຢູ່ແຂວງຈຳປາສັກ, ຕົ້ນຕໍແມ່ນຮັບເອົານັກຮຽນທີ່ຈົບຈາກໂຮງຮຽນສາມັນ 2 ແຂວງຄື: ແຂວງຈຳປາສັກ ແລະ ແຂວງອັດຕະປື, ຜະລິດຄູສອນໃນລະດັບ ຄູສອນອານຸບານ, ຄູສອນປະຖົມ ແລະ ຄູສອນມັດທະຍົມ

**ປະສິດທິພາບຂອງບົດສອນ** ໝາຍເຖິງ ເກນທີ່ໃຊ້ພິຈາລະນາວ່າບົດສອນທີ່ໃຊ້ໃນການຈັດການຮຽນຮູ້ແບບຮ່ວມມືເທັກນິກ CIRC ທີ່ສ້າງເຮັດໃຫ້ນັກຮຽນເກີດການຮຽນຮູ້ມີປະສິດທິພາບຕາມເກນ 80/80.

**80 ຕົວທຳອິດ** ໝາຍເຖິງ ປະສິດທິພາບຂອງຂະບວນການ ໄດ້ຈາກການທົດສອບຍ່ອຍຂອງແຕ່ລະບົດສອນ, ພຶດຕິກຳການຮຽນ ແລະ ຜົນງານຂອງນັກຮຽນໃນແຕ່ລະແຜນການຮຽນຮູ້, ໄດ້ຄະແນນລວມສະເລ່ຍ 80 ເປີເຊັນ.

**80 ຕົວຫຼັງ** ໝາຍເຖິງ ປະສິດທິພາບຂອງການຈັດກິດຈະກຳການຮຽນ-ການສອນໃນການປ່ຽນແປງພຶດຕິກຳຂອງນັກຮຽນ, ໄດ້ຈາກການທົດສອບວັດຄວາມສຳເລັດທາງການຮຽນກ່ຽວກັບການອ່ານຈັບໃຈຄວາມໄດ້ຄະແນນສະເລ່ຍ 80 ເປີເຊັນຂຶ້ນໄປ.

**ດັດຊະນີປະສິດທິຜົນການຮຽນຂອງນັກຮຽນ** ໝາຍເຖິງ ການພັດທະນາຄວາມກ້າວໜ້າດ້ານການຮຽນຂອງນັກຮຽນ, ໄດ້ຈາກຄະແນນທີ່ເຮັດບົດທົດສອບກ່ອນຮຽນ ກັບ ຄະແນນທົດສອບຫຼັງຮຽນ ພາຍຫຼັງການຈັດການຮຽນ-ການສອນ ແບບຮ່ວມມືເທັກນິກ CIRC.

**ຄວາມເພິ່ງພໍໃຈຂອງນັກຮຽນ** ໝາຍເຖິງ ຄວາມຮູ້ສຶກສຶກ, ການສະແດງອອກທາງດ້ານອາລົມຄື: ຄວາມມັກ, ຄວາມພໍໃຈ, ຄວາມເອົາໃຈໃສ່ຂອງນັກສຶກສາຕໍ່ການຈັດການຮຽນ-ການສອນທີ່ຖືກນຳໃຊ້ວິທີສອນແບບຮ່ວມມືເທັກນິກ CIRC.

## 4. ວິທີການຄົ້ນຄວ້າ

### 4.1 ແບບແຜນການວິໄຈ

ໃນການຄົ້ນຄວ້າຄັ້ງນີ້ເປັນການຄົ້ນຄວ້າແບບເຄິ່ງທົດລອງ (Quasi-Experimental Research) ຕາມແບບແຜນການຄົ້ນຄວ້າແບບກຸ່ມດຽວ ມີການສອບເສັງກ່ອນຮຽນ ແລະ ຫຼັງຮຽນ (One-Group-pretest and posttest) (Cresswell, 2012). ໂດຍນຳເອົາວິທີການສອນແບບເທັກນິກຮ່ວມມື CIRC ເຂົ້າໃນການສິດສອນນັກສຶກສາ ສາຍວິຊາຄູພາສາອັງກິດໃນປີ 3 ລະບົບ 12+4 ກ່ອນຈະດຳເນີນການສິດສອນຄັ້ງທຳອິດແມ່ນຈະເຮັດການສອບຖາມທັດສະນະຄວາມຄິດເຫັນ ແລະ ທົດສອບ (ທົດສອບກ່ອນການສອນ).

ໃນໄລຍະດຳເນີນການທົດລອງແມ່ນຈະໄດ້ມີການທົດສອບຍ່ອຍ 5 ຄັ້ງ (ສະສົມຄະແນນ). ຫຼັງຈາກສິດສອນສຳເລັດທັງ 5 ຄັ້ງ ເທົ່າກັບ 2 ເດືອນແມ່ນຈະໄດ້ສອບຖາມທັດສະນະຮັບຮູ້ ແລະ ເຮັດການທົດສອບ (ແບບທົດສອບຫຼັງການສອນ).

ຈາກນັ້ນນຳເອົາຜົນການສອບຖາມແລະ ທົດສອບກ່ອນແລະ ຫຼັງການທົດລອງໄປວິເຄາະແລະແປຜົນໃນຂັ້ນຕໍ່ໄປ.

### 4.2 ປະຊາກອນແລະກຸ່ມຕົວຢ່າງ

1) ປະຊາກອນທີ່ໃຊ້ໃນການຄົ້ນຄວ້າຄັ້ງນີ້ໄດ້ແກ່ນັກສຶກສາ ສາຍຄູພາສາອັງກິດ ລະບົບ 12+4 ວິທະຍາໄລຄູປາກເຊ, ແຂວງຈຳປາສັກ ທີ່ກຳລັງສຶກສາໃນສົກຮຽນ 2021-2022 ຈຳນວນທັງໝົດ 75 ຄົນ ຍິງ 52 ຄົນ.

2) ກຸ່ມຕົວຢ່າງທີ່ໃຊ້ໃນການວິໄຈຄັ້ງນີ້ໄດ້ແກ່: ນັກສຶກສາ ສາຍຄູພາສາອັງກິດ ປີ 3 ລະບົບ 12+4 ວິທະຍາໄລຄູປາກເຊ, ແຂວງຈຳປາສັກ ທີ່ກຳລັງສຶກສາໃນສົກຮຽນ 2021-2022 ແບບເຈາະຈົງຈຳນວນ 1 ຫ້ອງມີ 24 ຄົນ, ຍິງ 17 ຄົນ.

### 4.3 ເຄື່ອງມືທີ່ໃຊ້ໃນການວິໄຈ

1) ບົດສອນ ວິຊາພາສາອັງກິດກ່ຽວກັບການອ່ານຈັບໃຈຄວາມ ໂດຍການສອນແບບ CIRC ຈຳນວນ 5 ບົດ, ໃຊ້ເວລາສອນບົດລະ 2 ຊົ່ວໂມງ ລວມທັງໝົດ 10 ຊົ່ວໂມງ.

2) ແບບທົດສອບຍ່ອຍວັດຜົນສຳເລັດທາງການຮຽນກ່ຽວກັບການອ່ານຈັບໃຈຄວາມ 5 ສະບັບເຊິ່ງໃຊ້ວັດຄວາມຮູ້ຂອງນັກຮຽນໃນແຕ່ລະບົດສອນ, ລັກສະນະຂອງແບບທົດສອບ ເປັນແບບປາລະໄນທີ່ມີ 4 ຕົວເລືອກ.

3) ແບບທົດສອບວັດຜົນການຮຽນກ່ອນ ແລະ ຫຼັງສອນ ວິຊາພາສາອັງກິດກ່ຽວກັບການອ່ານຈັບໃຈຄວາມ ເປັນແບບປາລະໄນ, ມີ 4 ຕົວເລືອກ.

4) ແບບສອບຖາມຄວາມເພິ່ງພໍໃຈຂອງນັກຮຽນຕໍ່ກັບການຮຽນ - ການສອນ ວິຊາພາສາອັງກິດກ່ຽວກັບການອ່ານຈັບໃຈຄວາມ ໂດຍໃຊ້ວິທີສອນແບບ CIRC ເປັນແບບມາດຕາສ່ວນປະມານຄ່າ 5 ລະດັບ.

**4.4 ການຫາຄຸນນະພາບຂອງເຄື່ອງມື**

ໃນການຫາຄຸນນະພາບຂອງເຄື່ອງມືແຕ່ລະປະເພດຜູ້ວິໄຈໄດ້ປະຕິບັດດັ່ງລຸ່ມນີ້:

1) ສຶກສາຫຼັກສູດ ແລະ ຄູ່ມືຄູ ລາຍວິຊາພາສາອັງກິດສາຍພາສາອັງກິດ ລະບົບ 12+4 ປີ 3 ໃຫ້ເຂົ້າໃຈເນື້ອໃນ, ຫຼັກການ ເພື່ອນຳມາເປັນແນວທາງໃນການສ້າງແຜນການສອນ.

2) ສຶກສາເອກະສານ, ແນວຄິດ, ທິດສະດີທີ່ກ່ຽວຂ້ອງກັບການອ່ານຈັບໃຈຄວາມເພື່ອໃຊ້ເຂົ້າໃນການຈັດກິດຈະກຳກຸ່ມການຮຽນ-ການສອນໂດຍໃຊ້ເຕັກນິກ CIRC.

3) ກຳນົດຈຸດປະສົງ ແລະ ເນື້ອໃນຂອງແຜນການສອນແຕ່ລະບົດຈາກຈຸດປະສົງ ແລະ ເນື້ອໃນທີ່ໄດ້ສຶກສາໃນປຶ້ມແບບຮຽນວິຊາພາສາອັງກິດສາຍຄູພາສາອັງກິດ ປີ 3 ລະບົບ 12+4 ເຊິ່ງຜູ້ຄົ້ນຄວ້າໄດ້ເລືອກແຜນການສອນຈຳນວນທັງໝົດ 5 ບົດ.

4) ດຳເນີນການແຕ່ງບົດສອນເຕັກນິກ CIRC ແລະ ສ້າງສື່ການສອນຈຳນວນ 5 ບົດສອນ, ແຕ່ລະບົດໃຊ້ເວລາ 2 ຊົ່ວໂມງ, ລວມທັງໝົດແມ່ນ 10 ຊົ່ວໂມງ. ຜ່ານການວິເຄາະ, ປັບປຸງ ຈາກນັ້ນນຳມາໃຊ້ກັບກຸ່ມຕົວຢ່າງ.

4.2. **ການເກັບລວບລວມຂໍ້ມູນ**

ໃນຂະບວນການວິໄຈຄັ້ງນີ້ ຜູ້ວິໄຈໄດ້ດຳເນີນການວິໄຈໄປຕາມຂັ້ນຕອນດັ່ງລຸ່ມນີ້:

1) ຂໍໜັງສືອານຸຍາດເກັບກຳຂໍ້ມູນຈາກຄະນະບໍດີຄະນະສຶກສາສາດ ມະຫາວິທະຍາໄລຈຳປາສັກ, ຈາກນັ້ນນຳສະເໜີຕໍ່ຜູ້ອຳນວຍການ ວິທະຍາໄລຄູປາກເຊ ເພື່ອຂໍເກັບກຳຂໍ້ມູນ.

2) ປະສານກັບພາກວິຊາພາສາຕ່າງປະເທດ ແລະ ຄູຜູ້ສອນໃນສາຍຄູພາສາອັງກິດ ປີ 3 ລະບົບ 12+4 ວິທະຍາໄລຄູປາກເຊ ເພື່ອກຽມນັກສຶກສາເປັນກຸ່ມທົດລອງ

3) ດຳເນີນການທົດສອບກ່ອນຮຽນ (Pretest) ໂດຍໃຊ້ແບບທົດສອບວັດຜົນສຳເລັດທາງການຮຽນທີ່ກຽມໄວ້.

4) ດຳເນີນການສອນຕົວຈິງໂດຍໃຊ້ບົດສອນແບບ CIRC ທີ່ສ້າງໄປສອນກັບກຸ່ມທົດລອງ ເຊິ່ງເປັນນັກສຶກສາ ສາຍຄູພາສາອັງກິດ ປີ 3 ລະບົບ 12+4 ວິທະຍາໄລຄູປາກເຊ ຈຳນວນ 24 ຄົນ ພາກຮຽນທີ 1 ສົກຮຽນ 2021-2022

5) ຫຼັງຈາກສິ້ນສຸດການສອນທັງໝົດແລ້ວ ໄດ້ມີການທົດສອບຫຼັງຮຽນ (Post-test) ໂດຍໃຊ້ບົດທົດສອບວັດຜົນສຳເລັດທາງການຮຽນຊຸດດຽວກັບການສອບກ່ອນຮຽນ.

6) ຫຼັງຈາກທົດສອບວັດຜົນສຳເລັດທາງການຮຽນແລ້ວ ໃນຊົ່ວໂມງຕໍ່ໄປກໍແຈກຢາຍແບບສອບຖາມຄວາມເພິ່ງພໍໃຈໃຫ້ນັກຮຽນສະແດງຄວາມຄິດເຫັນຕໍ່ກັບການຈັດກິດຈະກຳການຮຽນ - ການສອນໂດຍນຳໃຊ້ວິທີສອນແບບຮ່ວມມື CIRC.

7) ນຳເອົາຂໍ້ມູນທີ່ໄດ້ມາຈາກເຄື່ອງມືແຕ່ລະຊະນິດມາຮວບຮວມເພື່ອນຳໄປວິເຄາະຜົນຂອງການທົດລອງ.

**4.3. ສະຖິຕິທີ່ໃຊ້ໃນການວິໄຈ**

ໃນການດຳເນີນການວິໄຈໃນຄັ້ງນີ້ ຜູ້ຄົ້ນຄວ້າໄດ້ນຳໃຊ້ສະຖິຕິການວິໄຈ.

**1) ຄ່າສະເລ່ຍພື້ນຖານໃນການວິເຄາະຂໍ້ມູນໄດ້ແກ່**

**(1) ຄ່າເປີເຊັນ (Present)** ເປັນການປຽບທຽບຄວາມຖີ່ ຫຼື ຈຳນວນທີ່ຕ້ອງການຈາກສູດ (ວາໂຣ ເພັງສະຫວັດ, 2014, ໜ້າ. 95-97)

$$P = \frac{f}{n} \times 100$$

ເມື່ອ P ແທນ ສ່ວນຮ້ອຍ

$f$ ແທນ ຄວາມຖີ່ຕ້ອງການແປເປັນສ່ວນຮ້ອຍ

$n$ ຈຳນວນຄວາມຖີ່ທັງໝົດ

**(2) ຄ່າສະເລ່ຍ** Mean ຄິດໄລ່ຈາກສູດ

$$\overline{X} = \frac{\sum x}{N}$$

ເມື່ອ $\overline{X}$ ແທນ ໃຫ້ຄະແນນສະເລ່ຍ

$\sum x$ ແທນ ໃຫ້ຜົນຄະແນນລວມ

$N$ ແທນ ໃຫ້ຈຳນວນນັກຮຽນໃນກຸ່ມທົດລອງ

**(3) ຄ່າຜັນປ່ຽນມາດຕະຖານ** ( Standard Deviation ) ຄິດໄລ່ຈາກສູດ

$$S.D = \sqrt{\frac{N\sum x^2 - \left(\sum x\right)^2}{N(N-1)}}$$

ເມື່ອ $S.D$ ແທນ ໃຫ້ຄ່າຜັນປ່ຽນມາດຕະຖານ

$X$ ແທນ ໃຫ້ຄະແນນຂອງນັກຮຽນກຸ່ມທົດລອງແຕ່ລະຄົນ

$\sum x$ ແທນ ໃຫ້ຜົນລວມຂອງຄະແນນທັງໝົດ

$\sum x^2$ ແທນ ໃຫ້ຜົນລວມຂອງຄະແນນແຕ່ລະຕົວຍົກກຳລັງ

$N$ ແທນໃຫ້ຄະແນນກຸ່ມທົດລອງ

**2) ສະຖິຕິທີ່ໃຊ້ໃນການກວດສອບຫາຄຸນນະພາບເຄື່ອງມື**

(1) **ຫາຄວາມທ່ຽງຕົງ** (Validity)

ຄວາມທ່ຽງຕົງຂອງບົດສອນແບບທົດສອບວັດຄວາມສຳເລັດທາງການຮຽນ ແລະ ແບບສອບຖາມຄວາມເພິ່ງພໍໃຈໂດຍໃຊ້ວິທີດັດສະນີຄວາມສອດຄ່ອງລະຫວ່າງຄຳຖາມກັບຈຸດປະສົງ (IOC) ໂດຍໃຊ້ສູດຈາກ (ພອນນີ ລີກົດລັດຕະນະ, 2013, ໜ້າ. 110) ດັ່ງນີ້

$$IOC = \frac{\sum R}{N}$$

IOC ແທນ ຄ່າດັດສະນີຄວາມສອດຄ່ອງລະຫວ່າງຜົນການຮຽນຮູ້ທີ່ຄາດຫວັງກັບເນື້ອໃນ ຫຼື ລະຫວ່າງກິດຈະກຳການຮຽນ-ການສອນຂອງແຕ່ລະເນື້ອໃນບົດສອນ

$\sum R$ ແທນຜົນລວມຄະແນນຄວາມຄິດເຫັນຂອງຜູ້ຊ່ຽວຊານທັງໝົດ

N ແທນໃຫ້ຜູ້ຊ່ຽວຊານທັງໝົດ

ພາຍຫຼັງເອົາເຄື່ອງມືໄປກວດນຳຜູ້ຊ້ຽວຊານ 5 ທ່ານ ສາມາດສະຫຼູບຄ່າດັດສະນີຄວາມສອດຄ່ອງຢູ່ລະຫວ່າງ 0.80 ຫາ 1.

(2) ດັດສະນີຄວາມຍາກງ່າຍ ແລະ ຄ່າອຳນາດຈຳແນກ ໂດຍໃຊ້ສູດ (ບຸນຊົມ ສີສະອາດ ພ້ອມຄະນະ, 2015, ໜ້າ. 97-98) ດັ່ງນີ້:

➢ **ສູດຫາຄວາມຍາກງ່າຍ**

$$p = \frac{H+L}{2N}$$

P ລະດັບຄວາມຍາກງ່າຍ

H ຈຳນວນຄົນກຸ່ມສູງທີ່ຕອບຖືກ

L ຈຳນວນຄົນກຸ່ມຕ່ຳທີ່ຕອບຖືກ

N ຈຳນວນຄົນກຸ່ມສູງ ຫຼື ກຸ່ມຕ່ຳ

➢ ສູດຫາຄ່າອຳນາດຈຳແນກ

$$r = \frac{H-L}{N}$$

$r$ ຄ່າອຳນາດຈຳແນກ

H ຈຳນວນຄົນກຸ່ມສູງທີ່ຕອບຖືກ

L ຈຳນວນຄົນກຸ່ມຕ່ຳທີ່ຕອບຖືກ

N ຈຳນວນຄົນກຸ່ມສູງ ຫຼື ກຸ່ມຕ່ຳ

- ຂໍ້ສອບທີ່ມີຄຸນນະພາບຕ້ອງມີຄ່າອຳນາດຈຳແນກ $0.20 \le r \le 1.00$
- ລະດັບຄວາມຍາກງ່າຍຂອງຂໍ້ສອບທີ່ເໝາະສົມແມ່ນຢູ່ລະຫວ່າງ $0.20 \le p \le 0.80$

(3) ຫາຄວາມເຊື່ອໝັ້ນ (Reliability) ຂອງແບບທົດສອບ ໂດຍໃຊ້ສູດວິທີຂອງຄູເດີ-ລິຊາດສັນ ( Kuder-Richardson Method) ຈາກສູດ KR-20 ດັ່ງນີ້: (ບຸນຊົມ ສີສະອາດ ພ້ອມຄະນະ, 2015, ໜ້າ. 105)

$$r_{tt} = \frac{k}{k-1}\left[1-\frac{\sum pq}{S_t^2}\right]$$

$r_{tt} = 0.71$

$r_{tt}$ ສຳປະສິດຄວາມເຊື່ອໝັ້ນ

k ຈຳນວນຂໍ້ສອບໃນແບບທົດສອບ

$p$ ອັດສ່ວນຂອງຄົນທີ່ຕອບຂໍ້ສອບໄດ້ຖືກຕ້ອງ

$q$ ອັດສ່ວນຂອງຄົນທີ່ຕອບຂໍ້ສອບແຕ່ລະຂໍ້ຜິດ

$pq$ ອັດສ່ວນຂອງຄົນທີ່ຕອບຂໍ້ສອບຖືກ ແລະ ຕອບຜິດ

$\sum pq$ ຜົນບວກຂອງ $pq$ ຂອງທຸກຂໍ້

$S_t^2$ ຄວາມຜັນປ່ຽນຂອງຄະແນນຂອງຜູ້ຖືກທົດສອບ

(4) ສະຖິຕິທີ່ໃຊ້ຫາຄວາມເຊື່ອໝັ້ນຂອງແບບສອບຖາມຄວາມເພິ່ງພໍໃຈຕໍ່ກັບການຈັດກິດຈະກຳການຮຽນຮູ້ແບບຮ່ວມມືເທັກນິກ CIRC ($\alpha$-Coefficient) ຂອງ Cronbach (ບຸນຊົມ ສີສະອາດ ພ້ອມຄະນະ, 2015, ໜ້າ. 113)

$$\alpha = \frac{n}{n-1}\left[1-\frac{\sum S_i^2}{S_t^2}\right]$$

$\alpha = 0.82$

$\alpha$ ແທນ ຄ ວາມເຊື່ອໝັ້ນຂອງແບບສອບຖາມ

n ແທນ ຈຳນວນຂໍ້ຂອງແບບສອບຖາມ

$\sum S_i^2$ ແທນຜົນລວມຂອງຄ່າຄະແນນຜັນປ່ຽນຂອງຄະແນນແຕ່ລະຂໍ້

$S_t^2$ ແທນຄ່າຄວາມຜັນປ່ຽນຂອງຄະແນນລວມ

**3) ສະຖິຕິທີ່ໃຊ້ວິເຄາະຫາປະສິດທິພາບຂອງແຜນການຈັດກິດຈະກໍາການຮຽນ( $E_1/E_2$ )**

ການຫາຄ່າປະສິດທິພາບຂອງບົດສອນ ວິຊາພາສາອັງກິດ ເລື່ອງການອ່ານຈັບໃຈຄວາມ ໂດຍໃຊ້ໂດຍໃຊ້ສູດ $E_1/\ E_2$ (ບຸນຊຶມ ສີສະອາດ ພ້ອມຄະນະ, 2015, ໜ້າ. 125-126) ການວິເຄາະສື່ ແລະ ເຕັກໂນໂລຊີທາງການສຶກສາ ( $E_1/E_2$ ) ດັ່ງນີ້:

$$E_1 = \frac{\frac{\sum X}{N}}{A} \times 100$$

$E_1$ ແທນ ຄ່າປະສິດທິພາບຂອງຂະບວນການ

$\sum X$ ແທນ ຜົນບວກຂອງຄະແນນຂະບວນການລະຫວ່າງການຮຽນ ແລະ ການສອບຍ່ອຍທຸກຊຸດ

N ແທນ ຈໍານວນນັກຮຽນທັງໝົດ

A ແທນ ຄະແນນເຕັມຂອງແບບທົດສອບລະຫວ່າງການຮຽນດ້ວຍການໃຊ້ບົດສອນທຸກ ບົດ

$$E_2 = \frac{\frac{\sum X}{N}}{B} \times 100$$

$E_2$ ແທນ ຄ່າປະສິດທິພາບຜົນສໍາເລັດຫຼັງການຮຽນ

$\sum X$ ແທນ ຜົນບວກຂອງຄະແນນທົດສອບຫຼັງການຮຽນ

N ແທນ ຈໍານວນນັກຮຽນທັງໝົດ

B ແທນ ຄະແນນເຕັມຂອງແບບທົດສອບຫຼັງການຮຽນ

**4) ສະຖິຕິທີ່ໃຊ້ວິເຄາະຫາຄ່າປະສິດທິຜົນການຮຽນຮູ້ຂອງນັກຮຽນ (E.I)**

ຫາຄ່າດັດຊະນີປະສິດທິຜົນ E.I ເພື່ອສຶກສາປະສິດທິຜົນຄວາມກ້າວໜ້າທາງດ້ານການພັດທະນາການຮຽນຂອງນັກຮຽນ (ບຸນຊຶມ ສີສະອາດ, 2003, ໜ້າ. 59) ໂດຍໃຊ້ສູດດັ່ງນີ້:

$$\text{ຄ່າດັດຊະນີປະສິດທິຜົນ} = \frac{\text{ຜົນລວມຂອງຄະແນນທົດສອບຫຼັງຮຽນ} - \text{ຜົນລວມຂອງຄະແນນທົດສອບກ່ອນຮຽນ}}{(\text{ຈໍານວນນັກຮຽນ})(\text{ຄະແນນເຕັມ}) - \text{ຜົນລວມຂອງຄະແນນທົດສອບກ່ອນຮຽນ}}$$

ຫຼື $E.I = \frac{P2-P1}{Total-P1}$

E.I ແທນ ດັດຊະນີປະສິດທິຜົນ

$P_1$ ແທນ ຜົນລວມຂອງຄະແນນຫຼັງຮຽນ

$P_2$ ແທນ ຜົນລວມຂອງຄະແນນກ່ອນຮຽນ

Total ແທນ ຜົນຄູນຈໍານວນນັກຮຽນກັບຄະແນນ

**5. ຜົນການວິໄຈ**

**ຕາຕະລາງ 1: ຜົນການວິເຄາະຫາປະສິດທິພາບຂະບວນການຈັດການຮຽນ -ການສອນ $E_1$**

ຈາກຕາຕະລາງ 1 ຜົນການຄົ້ນຄວ້າພົບວ່າປະສິດທິພາບຂອງຂະບວນການຮຽນ-ການສອນ ເຊິ່ງເປັນນັກຮຽນ 24 ຄົນ, ມີຜົນຄະແນນລວມທັງໝົດ 2894 , ມີຄະແນນສະເລ່ຍທັງໝົດ 8.01 ມີຄ່າຜັນປ່ຽນ

| n | ປະສິດທິພາບຂອງການຈັດການຮຽນ-ການສອນຂອງ $E_1$ | | | |
|---|---|---|---|---|
| | A | $\overline{X}$ | SD | P(%) |
| 24 | 10 | 8.01 | 2.09 | 80.38 |

ມາຕະຖານ (SD) ເທົ່າກັບ 2.09 ແລະ $E_1$=80.38

**ສະຫຼຸບໄດ້ວ່າ:** ປະສິດທິພາບຂອງຂະບວນ

| n | ປະສິດທິພາບຂອງການຈັດການຮຽນ-ການສອນຂອງ $E_2$ | | | | | |
|---|---|---|---|---|---|---|
| | A | $\overline{X}$ | | SD | | $E_2$ |
| | | ກ່ອນ | ຫຼັງ | ກ່ອນ | ຫຼັງ | |
| 24 | 10 | 12.54 | 20.79 | 1.95 | 1.79 | 83.16 |

ການຮຽນ-ການສອນອ່ານຈັບໃຈຄວາມພາສາອັງກິດ

ໂດຍໃຊ້ເຕັກນິກ CIRC $E_1$ ເທົ່າກັບ 80.38 ເຊິ່ງເປັນໄປຕາມເກນທີ່ຕັ້ງໄວ້ຄື: 80/80.

**ຕາຕະລາງ 2:** ຜົນການວິເຄາະການທົດສອບກ່ອນຮຽນ ແລະ ທົດສອບຫຼັງຮຽນ $E_2$

ຈາກຕາຕະລາງ 2 ຜົນການຄົ້ນຄວ້າພົບວ່າ ປະສິດທິພາບຂອງຄະແນນການວັດປະເມີນຜົນຈາກການເຮັດບົດທົດສອບວັດຜົນສໍາເລັດທາງການຮຽນ ໂດຍລວມທັງໝົດ 499 ມີ $\overline{X}$ =20.79; ຄ່າ S.D =1.79 ແລະ $E_2$ = 83.16

ໂດຍລວມສະຫຼຸບໄດ້ວ່າປະສິດທິພາບຂອງຜົນການຈັດ ການຮຽນ - ການສອນອ່ານຈັບໃຈຄວາມພາສາອັງກິດໂດຍໃຊ້ຮູບແບບ CIRC ມີປະສິດທິພາບ $E_2$ ເທົ່າກັບ 83.16 ເຊິ່ງສູງກ່ວາເກນທີ່ຕັ້ງໄວ້ຄື: 80/80.

☞ ວິເຄາະຫາດັດຊະນີປະສິດທິຜົນ (**E.I**) ການອ່ານຈັບໃຈຄວາມພາສາອັງກິດ ໂດຍໃຊ້ເຕັກນິກ CIRC ສໍາລັບນັກສຶກສາຄູ ສາຍຄູພາສາອັງກິດ ປີ3 ລະບົບ 12+4 ວິທະຍາໄລຄູປາກເຊ.

**ຕາຕະລາງ 3:** ສັງລວມຜົນວິເຄາະຄວາມເພິງພໍໃຈຂອງນັກຮຽນຕໍ່ກັບການຈັດການຮຽນ-ການສອນການອ່ານຈັບໃຈຄວາມພາສາອັງກິດໂດຍໃຊ້ເຕັກນິກ CIRC ທີ່ສະແດງອອກຢູ່ໃນ 5 ຂັ້ນຕອນ

| **ລ\ດ** | **ລາຍການເພິງພໍໃຈ** | $\overline{X}$ | **S.D** | **ລະດັບຄວາມເພິງພໍໃຈ** |
|---|---|---|---|---|
| 1 | ຂັ້ນກຽມການສອນ | 4.65 | 0.54 | ຫຼາຍທີ່ສຸດ |
| 2 | ຂັ້ນສອນ | 4.34 | 0.52 | ຫຼາຍ |
| 3 | ຂັ້ນກິດຈະກໍາກຸ່ມ | 4.50 | 0.56 | ຫຼາຍ |
| 4 | ຂັ້ນທົດສອບ | 4.58 | 0.54 | ຫຼາຍທີ່ສຸດ |
| 5 | ຂັ້ນປະເມີນ ແລະ ມອບລາງວັນ | 4.43 | 0.53 | ຫຼາຍ |
| **ລວມ** | | **4.50** | **0.53** | **ຫຼາຍ** |

☞ ຈາກຕາຕະລາງ 3 ພົບວ່າ ຄວາມເພິງພໍໃຈຂອງນັກຮຽນ ຕໍ່ກັບການຈັດການຮຽນ-ການສອນການອ່ານຈັບໃຈຄວາມພາສາອັງກິດ ໂດຍໃຊ້ເຕັກນິກ CIRC ເຫັນວ່ານັກຮຽນມີຄວາມເພິງພໍໃຈຫຼາຍທີ່ສຸດຢູ່ໃນຂັ້ນກຽມການສອນເພາະວ່ານັກຮຽນສ່ວນຫຼາຍມີຄວາມເຂົ້າໃຈໃນການແບ່ງກຸ່ມ, ການເຮັດວຽກຮ່ວມກຸ່ມ ແລະ ວິທີໃຫ້ຄະແນນໃນການເຮັດວຽກເປັນກຸ່ມ ໂດຍລວມຢູ່ໃນລະດັບ$\overline{X}$ = 4.65 ແລະ S.D = 0.54

## 6. ອະພິປາຍຜົນການວິໄຈ

ຈາກການຄົ້ນຄວ້າການຮຽນ-ການສອນການອ່ານຈັບໃຈຄວາມພາສາອັງກິດໂດຍໃຊ້ເຕັກນິກ CIRC ສໍາລັບນັກສຶກສາ ສາຍຄູພາສາອັງກິດ ປີ 3 ລະບົບ 12+4 ວິທະຍາໄລຄູປາກເຊ ເປັນກິດຈະກໍາການຮຽນຮູ້ແບບຮ່ວມມືທີ່ນັກຮຽນໄດ້ຮັບຜິດຊອບສຶກສາຄົ້ນຄວ້າຕາມຄວາມສາມາດ, ຮ່ວມວາງແຜນໃນການເຮັດວຽກກຸ່ມ ສະມາຊິກແຕ່ລະຄົນໄດ້ຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ໄດ້ແລກປ່ຽນຄວາມຄິດເຫັນຮ່ວມກັນເຮັດໃຫ້ບັນຍາກາດໃນການຮຽນຮູ້ບໍ່ເຄັ່ງຕຶງ, ເຮັດໃຫ້ນັກຮຽນມີຄວາມສາມັກຄີ, ກ້າສະແດງຄວາມຄິດເຫັນຂອງຕົນອອກມາ, ລວມໄປເຖິງການເຮັດແບບທົດສອບຍ່ອຍ ແລະ ຄູຈະແຈ້ງຜົນການທົດສອບຍ່ອຍໃຫ້ນັກຮຽນໄດ້ຮູ້, ນັກຮຽນໄດ້ຮູ້ຜົນຄວາມກ້າວໜ້າທາງການຮຽນ ຈະເຮັດໃຫ້ນັກຮຽນເກີດມີຄວາມພາກພູມໃຈໃນຄວາມ

ສາມາດຂອງຕົນ ແລະ ເປັນການຈູງໃຈໃຫ້ນັກຮຽນມີຄວາມສົນໃຈໃນຂັ້ນຕໍ່ໄປ.

ຜູ້ວິໄຈສະຫຼຸບໄດ້ດັ່ງນີ້:

**ປະສິດທິພາບຂອງບົດສອນອ່ານຈັບໃຈຄວາມພາສາອັງກິດໂດຍໃຊ້ເຕັກນິກ CIRC ຕາມເກນ 80/80 ຜູ້ຄົ້ນຄວ້າໄດ້ສິດສອນກັບນັກສຶກສາຄູສາຍພາສາອັງກິດ ປີ3 ລະບົບ 12+4 ວິທະຍາໄລຄູປາກເຊ ຈຳນວນ 24 ຄົນ, ຍິງ 12 ຄົນ**

ໂດຍການສິດສອນຕົວຈິງໃນລະຫວ່າງຮຽນມີການເຮັດກິດຈະກຳກຸ່ມ, ທົດສອບຍ່ອຍບຸກຄົນ ຈຳນວນ 5 ແບບທົດສອບ ຫຼັງຈາກນັ້ນທົດສອບຫຼັງຮຽນ ດ້ວຍແບບທົດສອບ 1 ແບບທົດສອບເຊິ່ງມີຜົນຄ່າຄະແນນປະສິດທິພາບຂອງຂະບວນການຮຽນ-ການສອນ ເຊິ່ງເປັນນັກຮຽນ 24 ຄົນ, ມີຜົນຄະແນນລວມທັງໝົດ 2894, ມີຄະແນນສະເລ່ຍທັງໝົດ 8.01 ມີຄ່າຜັນປ່ຽນມາຕະຖານ (SD) ເທົ່າກັບ 2.09 ແລະ $E_1$ = 80.38

**ປະສິດທິຜົນການອ່ານຈັບໃຈຄວາມພາສາອັງກິດໂດຍໃຊ້ເຕັກນິກ CIRC ສຳລັບນັກສຶກສາຄູສາຍພາສາອັງກິດ ປີ 3 ລະບົບ 12+4 ວິທະຍາໄລຄູປາກເຊ.**

ຜູ້ຄົ້ນຄວ້າໄດ້ນຳເອົາຜົນຄະແນນຈາກການທົດສອບນັກສຶກສາ ສາຍຄູພາສາອັງກິດ ປີ 3 ລະບົບ 12+4 ທີ່ໄດ້ຈາກຜົນຄະແນນການທົດສອບກ່ອນຮຽນ ແລະ ຫຼັງຮຽນ ນຳມາວິເຄາະ ດັ່ງນັ້ນ, ເພື່ອພິສູດສົມມຸດຕະຖານ H1 ແລະ H2 ຈາກຜົນການຄົ້ນຄວ້າພົບວ່າ: ຄ່າ $E_1$/ $E_2$ ເທົ່າກັບ 80.38/83.16 ແລະ E.I ເທົ່າກັບ 0.66. ສະແດງວ່າ ສົມມຸດຕິຖານ H1ແລະ H2 ແມ່ນຖືກຍອມຮັບ. ເຊິ່ງຜົນການວິເຄາະລະອຽດໃນຜົນການຄົ້ນຄວ້າພົບວ່າ ປະສິດທິພາບຂອງຄະແນນການວັດປະເມີນຜົນຈາກການເຮັດບົດທົດສອບວັດຜົນສຳເລັດທາງການຮຽນໂດຍລວມທັງໝົດ 499 ມີ =20.79; ຄ່າ S.D =1.79 ແລະ $E_2$ = 83.16

**ວິເຄາະຫາຄວາມເພິງພໍໃຈຂອງນັກຮຽນຕໍ່ກັບການຈັດການຮຽນ-ການສອນການອ່ານຈັບໃຈຄວາມພາສາອັງກິດໂດຍໃຊ້ເຕັກນິກ CIRC ສຳລັບນັກສຶກສາຄູສາຍພາສາອັງກິດ ປີ3 ລະບົບ 12+4 ວິທະຍາໄລຄູປາກເຊ.**

ຄວາມເພິ່ງພໍໃຈຕໍ່ກິດຈະກຳ ເພິງພໍໃຈໃນຂັ້ນຕອນກຽມການສອນອ່ານຈັບໃຈຄວາມພາສາອັງກິດໂດຍໃຊ້ເຕັກນິກ CIRC ຕໍ່ກັບຜູ້ຮຽນຮູ້ໂດຍລວມແມ່ນຢູ່ໃນລະດັບຫຼາຍທີ່ສຸດ; S.D = 0.54 ເມື່ອພິຈາລະນາເປັນລາຍຂໍ້ແລ້ວເຫັນວ່າຂໍ້ທີ 1 ມີ = 4.67 ແລະ S.D = 0.56, ຂໍ້ທີ 2 ມີ = 4.63 ແລະ S.D = 0.59, ຂໍ້ທີ 3 ມີ = 4.67 ແລະ S.D = 0.56.ເຊິ່ງເປັນຄະແນນທີ່ອອກມາໃນລະດັບດີຫາດີຫຼາຍເນື່ອງມາຈາກ ການຂະບວນການຈັດກິດຈະກຳ ຜູ້ວິໄຈໄດ້ບັນຍາຍ ແລ້ວໄດ້ເນັ້ນການປະຕິບັດຕົວຈິງດ້ວຍຕົວເຂົາເຈົ້າເອງ ເລີ້ມຈາກການການຮັບຟັງທິດສະດີສູ່ການປະຕິບັດ ແລະ ການນຳໃຊ້.

**7. ຄຳຈາລຶກບຸນຄຸນ**

ວິທະຍານິພົນເຫຼັ້ມນີ້ສຳເລັດລຸລ່ວງໄປດ້ວຍດີກໍຍ້ອນຄວາມເອົາໃຈໃສ່ຊີ້ນຳ ແລະ ຊ່ວຍເຫຼືອຈາກທ່ານ ຣສ. ປອ ສີຖານ ສຸຂະວົງ ປະທານທີ່ປຶກສາວິທະຍານິພົນ ແລະ ທ່ານ ປທ. ບຸນສິງ ສໍແກ້ວມະນີ ແລະ ທ່ານ ປທ.ທົບພະວັນ ຂັນທະພອນ ອາຈານຜູ້ຊ່ວຍທີ່ປຶກສາວິທະຍານທີ່ໄດ້ເສຍສະຫຼະເວລາອັນລ້ຳຄ່າຊີ້ນຳ, ຊ່ວຍເຫຼືອ ແລະ ໃຫ້ຄຳປຶກສາທີ່ເປັນແນວທາງໃນແຕ່ລະຂັ້ນຕອນຂອງການຂຽນບົດວິທະຍານິພົນດ້ວຍຄວາມເອົາໃຈໃສ່ ແລະ ຈິງໃຈ ຈົນເຮັດໃຫ້ວິທະຍານິພົນເຫຼັ້ມນີ້ໄດ້ຮັບຜົນສຳເລັດໄປດ້ວຍດີ ໃນນາມຂ້າພະເຈົ້ານັກວິໄຈຂໍຈົດຈຳຄຸນງາມຄວາມດີ ແລະ ຈາລຶກບຸນຄຸນອັນປະເສີດຂອງທ່ານ ແລະ ຂໍຂອບໃຈເປັນຢ່າງສູງມານະ

ໂອກາດນີ້ດ້ວຍ.ຂໍສະແດງຄວາມຂອບໃຈເປັນຢ່າງສູງມາຍັງປະທານ, ຄະນະກຳມະການສອບປົກລວິທະຍານິພົນທຸກທ່ານທີ່ໃຫ້ຄຳແນະນຳທີ່ເປັນປະໂຫຍດເພື່ອປັບປຸງບົດວິທະຍານິພົນໃຫ້ມີຄວາມສົມບູນຍິ່ງຂຶ້ນ.

ຂໍສະແດງຄວາມຂອບໃຈຢ່າງສູງມາຍັງຜູ້ຊ່ຽວຊານທັງ 5 ທ່ານ ທີ່ກວດສອບ ແລະ ໃຫ້ການແນະນຳປັບປຸງໃນການສ້າງເຄື່ອງມືເກັບກຳຂໍ້ມູນຈົນສຳເລັດໄປດ້ວຍດີ.

ພິເສດ ຂໍຂອບໃຈມາຍັງຄະນະບໍດີຄະນະສຶກສາສາດ ມະຫາວິທະຍໄລຈຳປາສັກ,ຜູ້ອຳນວຍການ, ຄູສອນແລະ ນ້ອງນັກສຶກສາ ວິທະຍາໄລຄູປາກເຊ ນະຄອນປາກເຊ ແຂວງ ຈຳປາສັກ ທີ່ໃຫ້ການຮ່ວມມືຊ່ວຍເຫຼືອ ແລະ ອຳນວຍຄວາມສະດວກໃນການທົດລອງເຄື່ອງມື ແລະ ເກັບກຳຂໍ້ມູນໃນຄັ້ງນີ້ ຈົນສຳເລັດໄປດ້ວຍດີ.

**8. ເອກະສານອ້າງອີງ:**

ກະຊວງສຶກສາທິການ ແລະ ກິລາ. (2009). ວິທີສອນ Reading 2. Nhan Dan Printing House HCMC.

ກະຊວງສຶກສາທິການ ແລະ ກິລາ. (2016). ກົດໝາຍວ່າດ້ວຍການສຶກສາ (ສະບັບປັບປຸງ). ພິມທີ່ ບໍລິສັດລັດ ວິສາຫະກິດໂຮງພິມສຶກສາ.

ກະຊວງສຶກສາທິການ ແລະ ກິລາ. (2016). ແຜນພັດທະນາຂະແໜງສຶກສາ ແລະ ກິລາ 5 ປີ ຄັ້ງທີ III(2016-2020). ນະຄອນຫຼວງວຽງຈັນ.

ກະຊວງສຶກສາທິການ, ກົມສ້າງຄູ, ສູນພັດທະນາຄູ. (2009). ວິທີສອນພາສາລາວ 4. ນະຄອນຫຼວງວຽງຈັນ: ພິມທີ່: Nhan Dan Printing house.

ກາຣຸນນັນ ຣັດຕະນະແສນວົງ. (2005). ການໃຊ້ພາສາໄທ. ກຸງເທບ: ຫ້າງຫຸ້ນສ່ວນຈຳກັດ ວີ.ເຈ.ພິນຕິ້ງ.

ກິຕິມາ ປຣີດີດິລົກ. (1992). ທິດສະດີຄວາມເພິ່ງພໍໃຈ. ກຸງເທບມະຫານະຄອນ.

ກິຕິມາ ປຣີດີດິລົກ. (1986). ທິດສະດີການບໍລິຫານອົງກອນ. ກຸງເທບ: ພາກວິຊາບໍບຫານການສຶກສາ ຄະນະສຶກສາສາດມະຫາວິທະຍາໄລສີນະຄະລິນທະວິໂລດປະສານມິດ.

ກົມສ້າງຄູ, ກະຊວງສຶກສາທິການ. (2006). ຫໍສະໝຸດພື້ນຖານ. ນະຄອນຫຼວງວຽງຈັນ ພິມທີ່.ຊ້າງຄູ້ການພິມ

ແກ້ວມະນີ ມາລາທອງ. (2015). ການນຳໃຊ້ວິທີສອນແບບຮ່ວມມື CIRC ເຂົ້າໃນການຈັດການຮຽນການສອນວິຊາພາສາລາວ ເລື່ອງການອ່ານຈັບໃຈຄວາມສຳຄັນສຳລັບນັກຮຽນຊັ້ນປະຖົມສຶກສາປີທີ 5 ໂຮງຮຽນປະຖົມສົມບູນວຽງສະຫວັນ ເມືອງຫາດຊາຍຟອງ ນະຄອນຫຼວງວຽງຈັນ. (ວິທະຍານິພົນລະດັບ ປະລິນຍາໂທ). ຄະນະສຶກສາສາດ: ມະຫາວິທະຍາໄລແຫ່ງຊາດ.

ຂັນທິບ ສະພາພອນ. (2012). ການພັດທະນາຄວາມສາມາດໃນການອ່ານຈັບໃຈຄວາມພາສາອັງກິດຂອງນັກສຶກສາເອກພາສາອັງກິດທີ່ວິທະຍາໄລຫຼວງພະບາງ. (ວິທະຍານິພົນລະດັບ ປະລິນຍາໂທ). ນະຄອນປະຖົມ: ມະຫາວິທະຍາໄລລາດຊະພັດນະຄອນປະຖົມ.

ຄູນ ພົມມະທາ, ພວງສີ ບຸນມາເພັດ. (2008). ວິທີສອນພາສາລາວ 1. Nhan Dan Printing House HCMC.

ຄຳເມິງ ດວງທອງລາ ພ້ອມຄະນະ. (2009). ພາສາລາວ 2. Nhan Dan Printing House HCMC.

ຄຳຫລ້າ ມະນີວົງ. (2018). ໄດ້ຄົ້ນຄວ້າກ່ຽວກັບວິຊາພາສາລາວ ເລື່ອງ: ການອ່ານຈັບໃຈຄວາມ ຊັ້ນປະຖົມປີທີ 5 ໂດຍນຳໃຊ້ວິທີສອນແບບ CIRC. ຄະນະສຶກສາສາດ: ມະຫາວິທະຍາໄລແຫ່ງຊາດ.

ສະນິດ ສັດໂຍພາດ. (1999). ພາສາໄທເພື່ອການສື່ສານ ແລະ ສືບຄົ້ນ. ຊຽງໃໝ່: ສະຖາບັນຣາດຊະພັດ ຊຽງໃໝ່.

ສາວເພວະລີ ຜັງດີ. (2013). ຄວາມເພິງພໍໃຈຕໍ່ກັບການຮຽນ-ການສອນໃນຫຼັກສູດຂອງພາກວິຊາສະຖິຕິ ຄະນະວິທະຍາສາດມະຫາວິທະຍາໄລຂອນແກ່ນ. (ວິທະຍານິພົນລະດັບ ປະລິນຍາໂທ) ຄະນະວິທະຍາສາດ: ມະຫາວິທະຍາໄລຂອນແກ່ນ.

ສີລິນຸດ ທຳມະນິຍົມ. (2011). ການພັດທະນາກິດຈະກຳການຮຽນຮູ້ຄະນິດສາດແບບ CIPPA MODEL. (ວິທະຍານິພົນລະດັບ ປະລິນຍາໂທ). ມະຫາສາລະຄາມ: ມະຫາວິທະຍາໄລສາລະຄາມ.

ສີລິມະນີ ບັນຈິງ. (2006). ເອກະສານປະກອບສອນລາຍວິຊາເດັກປະຖົມກັບທັກສະທາງພາສາ. ກຸງເທບ: ຄະນະຄູສາດມະຫາວິທະຍາໄລລາດຊະພັດສວນສຸນັນທາ.

ສຸຈິດຕຣາ ທັບມະນີ. (2013). ການປຽບທຽບຄວາມສາມາດດ້ານການອ່ານ ແລະ ຂຽນພາສາອັງກິດຂອງນັກຮຽນຊັ້ນປະຖົມປີທີ 6 ໂດຍຮູບແບບການສອນ CIRC ກັບການສອນປົກກະຕິ . ວາລະສານສຶກສາສາດ ມະຫາວິທະຍາໄລຂອນແກ່ນ, 102-103.

ສຸລາງ ໂຄ້ຕະກູນ. (2009). ຈິດຕະວິທະຍາການສຶກສາ. (ພິມຄັ້ງທີ 8): ສຳນັກພິມແຫ່ງຈຸຬາລົງກອນມະຫາວິທະຍາໄລ.

ສຸວິດ ມູນຄຳ, ອໍລະໄທ ມູນຄຳ. (2007). 19 ວິທີການຈັດການຮຽນຮູ້. ກຸງເທບ: ໂຮງພິມພາພິມ.

ສົມພອນ ຊໍ່ສູງເນີນ. (2015). ການປຽບທຽບການອ່ານ ແລະ ການຂຽນສື່ຄວາມ, ກຸ່ມສາລະການຮຽນຮູ້ພາສາໄທຍຊັ້ນປະຖົມປີທີ 5 ໂດຍໃຊ້ການຮຽນຮູ້ດ້ວຍກຸ່ມຮ່ວມມື CIRC ກັບການຮຽນຮູ້ແບບຊິນແນດຕິກສ໌. (ວິທະຍານິພົນລະດັບ ປະລິນຍາໂທ). ມະຫາສາລະຄາມ: ມະຫາວິທະຍາໄລສາລະຄາມ.

ສົມເໝາະ ວົງປັນຍາ ແລະ ສີພອນ ສຸນັນທາ. (2010). ແບບຮຽນພາສາລາວຊັ້ນມັດທະຍົມປີທີ 1. ກະຊວງສຶກສາທິການ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ: ພິມທີ່:ບໍລິສັດ ລັດວິສະຫະກິດ ໂຮງພິມສຶກສາ.

ແສນປະເສີດ ປານນຽມ. (2009). ການປຽບທຽບຄວາມສາມາດໃນການອ່ານ ແລະ ການຂຽນຂອງນັກສຶກສາລະດັບປະລິນຍາບັນດິດທີ່ສອນດ້ວຍວິທີການຮຽນແບບຮ່ວມມືເທັກນິກ CIRC ກັບວິທີສອນປົກກະຕິ. (ວິທະຍານິພົນລະດັບປະລິນຍາໂທ). ກຸງເທບ: ມະຫາວິທະຍາໄລສີລະປະກອນ.

ຊະນິດາ ໄຍບູລີ. (2015).ການພັດທະນາທັກສະການອ່ານຈັບໃຈຄວາມສຳຄັນຂອງພາສາອັງກິດໂດຍໃຊ້ເຕັກນິກ CIRC. ມະຫາວິທະຍາໄລລາດສະພັດມະຫາສາລະຄາມ.

ໄຊວັດ ສຸທິລັດ. (2015). 80 ນະວັດຕະກຳ ການຈັດການຮຽນຮູ້ທີ່ເນັ້ນຜູ້ຮຽນເປັນສຳຄັນ. (ພິມຄັ້ງທີ 6). ນົນທະບູລີ: ພີບາລານດີໄຊແອນປຣິ້ນຕິ້ງ.

ເຍົາວະດີ ວິບຸນສີ. (2006). ການວັດ ແລະ ການສ້າງແບບທົດສອບວັດຜົນສຳເລັດ. ກຸງເທບມະຫານະຄອນ: ສຳນະພິມຈຸລາລົງກອນມະຫາວິທະຍາໄລ.

ຖະປານີ ນະຄອນຣົບ. (2002). ການສອນພາສາໄທຍຂັ້ນພື້ນຖານລະດັບປະຖົມສຶກສາ. ກຸງເທບ: ສູນສົ່ງເສີມການອ່ານ.

ຖະປານີ ນາຄອນທອນ. (2006). ໜັງສືຮຽນສາລະການຮຽນຮູ້ພື້ນຖານກຸ່ມສາລະການຮຽນຮູ້ພາສາ

ໄທຊັ້ນມັດທະຍົມ 1-3. ກຸງເທບ: ອັງສອນຈະເລີນທັດ.

ທິດສະນາ ແຂມມະນີ. (2009). ສາດການສອນ. ກຸງເທບ: ບໍລິສັດດານສຸທາຣາການພິມ.

ທິດສະນາ ແຂມມະນີ. (2013). ສາດການສອນ. (ພິມຄັ້ງທີ 7): ສຳນັກພິມແຫ່ງຈຸລາລົງກອນມະຫາວິທະຍາໄລ.

ທິດາ ໂມສິກລັດ ແລະ ນະພາໄລ ສຸວັນນະທາດາ. (2001). ພາສາໄທຍ 1. (ພິມຄັ້ງທີ 4). ກຸງເທບ: ບໍລະບຸ.

ນັນທິນີ ທິນນະວົງ. (2011). ປັດໄຈທີ່ສົ່ງຜົນກະທົບຕໍ່ຄວາມສາມາດໃນການອ່ານພາສາອັງກິດຂອງນັກຮຽນປະຖົມສຶກສາ. ບັນດິດວິທະຍາໄລມະຫາວິທະຍາໄລສິລະປະກອນ.

ບຸນຊົມ ສີສະອາດ. (2003). ການວິໄຈສຳລັບຄູ. ກຸງເທບມະຫານະຄອນ: ສຸວິຣິຍາສານ.

ບຸນຊົມ ສີສະອາດ. (2011). ການວິໄຈເບື້ອງຕົ້ນ. ກຸງເທບ: ສຸວິຣິຍະສານ.

ບຸນຊົມ ສີສະອາດ ພ້ອມຄະນະ. (2015). ພື້ນຖານການວິໄຈການສຶກສາ. ຄະນະສຶກສາສາດ, ມະຫາວິທະຍາໄລສາລະຄາມ: ຕັກສິລາການພິມ 205/4 ຈັງຫວັດມະຫາສາລະຄາມ.

ບຸນໝັ້ນ ທະນາສຸກວັດ. (2014). ຈິດຕະວິທະຍາອົງກອນ. ກຸງເທບ: ສຸວິຣິຍາສານ.

ບົວຈັນ ວິໄລຈິດ ພ້ອມຄະນະ. (2009). ວິທີສອນພາສາລາວ 1. Nhan Dan Printing House HCMC.

ບົວສະຫວັນ ຫອມສີສົມບັດ. (2018). ການອ່ານຈັບໃຈຄວາມໂດຍນຳໃຊ້ວິທີສອນແບບ KWL-Plus ເຂົ້າ ໃນວິຊາພາສາລາວເລື່ອງ ການອ່ານຈັບໃຈຄວາມສຳຄັນ ສຳລັບນັກຮຽນປະຖົມປີທີ 5. ຄະນະສຶກສາສາດ: ມະຫາວິທະຍາໄລແຫ່ງຊາດ.

ບັນລື ພະທັດສະວັນ. (2013). ແນວພັດທະນາການອ່ານໄວ ຄິດເປັນ. ກຸງເທບ: ທຳມະດາເພັດ.

ປຣະຍົງ ກັ່ນສິດທິ. (2013). ການສອນພາສາອັງກິດ. ກຸງເທບ: ພິມທີ່:ສຳນັກພິມ ສູນສົ່ງເສີມວິຊາການ.

ປຣະສາດ ອິທິປີດາ. (2004). ສາຣັດຖະຈິດຕະວິທະຍາການສຶກສາ ມະຫາສະຣະຄາມ. ມະຫາສາລະຄາມ: ຄະນະສຶກສາສາດ ມະຫາວິທະຍາໄລສາລະຄາມ. ມະຫາສາລະຄາມ: ມະຫາວິທະຍາໄລສາລະຄາມ.

ປຣະສາດ ເນືອງສະເຫຼີມ. (2013). ວິໄຈການສອນ. ກຸງເທບ: ບໍລິສັດວີປີນ 1991 ຈຳກັດ.

ປະເທີນ ມະຫາຂັນ. (1987). ການອ່ານເບື້ອງຕົ້ນ. ກຸງເທບ: ໂອດຽນໂຕ.

ປັນທິຕາ ສຸກດຳ ພ້ອມຄະນະ. (2022). ຜົນການຈັດການຮຽນຮຽນຮູ້ແບບຮ່ວມມື ເທັກນິກ CIRC ຮ່ວມກັບເທັກນິກໃຊ້ກຣາຟິກທີ່ມີຕໍ່ການອ່ານຈັບໃຈຄວາມພາສາໄທ. (ວິທະຍານິພົນລະດັບ ປະລິນຍາໂທ). ມະຫາວິທະຍາໄລເທັກນິກ.

ຜະເຊີນ ກິດຈະການ. (2011). ການວັດຜົນການສຶກສາ. ມະຫາສະລະຄາມ: ມະຫາວິທະຍາໄລສາລະຄາມ.

ພອນນີ ລີກິດລັດຕະນະ. (2022). ການວິໄຈທາງການສຶກສາ. (ພິມຄັ້ງທີ 8). ສະຖາບັນເຕັກໂນໂລຊີພະຈອມເກົ້າຄຸນທະຫານລາດກະບັງ.

ພະນິດນັນ ບຸນພາມີ. (2009). ເທັກນິກການອ່ານເບື້ອງຕົ້ນສຳລັບບັນນາຣັກສາດ. ນະຄອນລາດຊະສີມາ.

ພາທິບ ຄີສຸດ. (2010). ເທັກນິກການອ່ານ. ກຸງເທບ: ມະຫາວິທະຍາໄລຈຸລາລົງກອນ.

ພິມພິສຸດ ປອດໂປ່ງ. (2020). ການສຶກສາຄວາມເພິງພໍໃຈໃນການຈັດການຮຽນການສອນ ລະດັບຊັ້ນປະກາຊະນີຍະບັດວິຊາຊີບ (ປວຊ). (ວິທະຍານິພົນລະດັບ ປະລິນຍາໂທ). ວິທະຍາໄລເທັກນິກປະທຸມທານີ.

ພຽງໃຈ ກັນລາ. (2022). ການພັດທະນາຜົນສຳເລັດດ້ານການອ່ານຈັບໃຈຄວາມ ການຂຽນສື່ຄວາມໝາຍ ແລະ ການຄິດວິເຄາະ ຂອງນັກຮຽນຊັ້ນປະຖົມສຶກສາ ປີທີ 2 ໂດຍໃຊ້ກຸ່ມຮ່ວມມືແບບ CIRC. (ວິທະຍານິພົນລະດັບ ປະລິນຍາໂທ). ມະຫາວິທະຍາໄລລາດສະພັດມະຫາສາລະຄາມ.

ພັດສະລີ ແຈ່ມຈຳລຸນ. (2010). ການປຽບທຽບການອ່ານຈັບໃຈຄວາມຂອງນັກຮຽນຊັ້ນມັດທະຍົມປີທີ 2 ເມືອງສະອຳ ແຂວງເພັດສະບູລີ ໂດຍວິທີອ່າແບບ KWL-Plus ກັບແບບປົກກະຕິ. (ວິທະຍານິພົນລະດັບ ປະລິນຍາໂທ). ເພັດສະບູລີ: ມະຫາວິທະຍາໄລສີລະປະກອນ.

ມະລິວັນ ພອນນິຄົມ. (2017). ການພັດທະນາກິດຈະກຳການຮຽນຮູ້ການອ່ານວັນນະຄະດີໄທໂດຍໃຊ້ເທັກນິກ CIRC ສຳລັບນັກຮຽນຊັ້ນມັດທະຍົມສຶກສາປີທີ 4. (ວິທະຍານິພົນລະດັບ ປະລິນຍາໂທ).ມະຫາວິທະຍາໄລບູລະພາ.

ມູດານາ ໜັດອາດ້ຳ. (2015). ຜົນການຈັດການຮຽນຮູ້ແບບຮ່ວມມືເທັກນິກ CIRC ຮ່ວມກັບການໃຊ້ຜັງກຣາຟິກທີ່ມີຕໍ່ຄວາມສາມດໃນການອ່ານຈັບໃຈຄວາມ ແລະ ຂຽນສະຫຼຸບຄວາມກຸ່ມສາລະການຮຽນຮູ້ພາສາໄທຍຂອງນັກຮຽນຊັ້ນມັດທະຍົມສຶກສາປີທີ 1. (ວິທະຍານິພົນລະດັບ ປະລິນຍາໂທ).ມະຫາສາລະຄາມ: ມະຫາວິທະຍາໄລສາລະຄາມ.

ລ້ວນ ສາຍຍົດ ແລະ ອັງຄະນາ ສາຍຍຸດ. (2009). ເທັກນິກການວັດຜົນການຮຽນຮູ້. ກຸງເທບມະຫານະຄອນ: ສຸວີຣິຍະສານ.

ລິນທອນລະພັດ ສະເຫຼີມທຳມະວົງ. (2015). ການພັດທະນາຄວາມສາມາດດ້ານການອ່ານຈັບໃຈຄວາມຂອງນັກຮຍນຊັ້ນປະຖົມສຶກສາປີທີ 6 ດ້ວຍການຈັດການຮຽນຮູ້ເທັກນິກ KLW Plus. (ວິທະຍານິພົນລະດັບ ປະລິນຍາໂທ). ມະຫາວິທະຍາໄລສີລະປະກອນ.

ເລືອງຍົດ ສີຣິເສົາ. (2012). ການພັດທະນາທັກສະການອ່ານ ແລະ ການຂຽນສະກົດຄຳບໍ່ກົງມາດຕາຕົວສະກົດໂດຍໃຊ້ແບບຝຶກທັກສະກຸ່ມສາລະການຮຽນຮູ້ພາສາໄທຊັ້ນປະຖົມສຶກສາປີທີ 4 ໂຮງຮຽນບ້ານໜອງບົວກູດ ອຳເພືອາປີປະທຸມ ຈັງຫວັສາລະຄາມ. (ວິທະຍານິພົນລະດັບ ປະລິນຍາໂທ).ມະຫາວິທະຍາໄລຣສະພັດມະຫາສາລະຄາມ: ມະຫາບັນດິດ (ຫຼັກສູດ ແລະ ການສອນ) ມະຫາສາລະຄາມ.

ອາໂຣ ເພັງສະຫວັດ. (2015). ການວິໄຈໃນຊັ້ນຮຽນ. ກຸງເທບ: ສຸວໍລະລິຍາສານ.

ວິມົນລັດ ສຸທອນໂລດ. (2011). ການອອກແບບການຈັດການຮຽນຮູ້. ມະຫາສາລະຄາມ: ມະຫາວິທະຍາໄລສາລະຄາມ.

ວັດຊະລາ ເລົ່າຮຽນດີ. (2005). ເທັກນິກການຈັດການຮຽນ-ການສອນ. (ພິມຄັ້ງທີ 4). ນະຄອນປະຖົມ: ມະຫາວິທະຍາໄລສີລະປະກອນ.

ວັດທະພອນ ລະງັບທຸກ. (1999). ແຜນການສອນທີ່ເນັ້ນຜູ້ຮຽນເປັນສູນກາງຈາກຫຼັກສູດການສອນ. (ພິມຄັ້ງທີ 2). ກຸງເທບມະຫານະຄອນ: ຄອມພິວເຈັກກຣາຟິກ.

ວໍລະນີ ໂສມປະຍູຣ. (2010). ເທັກນິກການສອນພາສາໄທຍ. ກຸງເທບ: ດອກຫຍ້າວິຊາການ.

ວອນຣະນີ ໂສມປະຍຸ. (1999). ການສອນພາສາໄທ ລະດັບປະຖົມສຶກສາ. ກຸງເທບມະຫານະຄອນ: ພິມທີ່: ໄທວັດທະນາພານິດ.

ວຽງພອນ ສີອໍາພອນ ພ້ອມຄະນະ. (2009). ພາສາລາວ-ວັນນະຄະດີ 1. ນະຄອນຫຼວງວຽງຈັນ: Nhan Dan Printing House HCMC.

ເອື້ອມພອນ ໂຊກສຸຊາດ. (2556). ການສຶກສາຄວາມສາມາດອ່ານຈັບໃຈຄວາມຂອງນັກຮຽນອາຍຸ 9-12 ປີທີ່ມີບັນຫາທາງດ້ານການຮຽນຮູ້ດ້ານການອ່ານຈາກການສອນອ່ານໂດຍໃຊ້ວິທີ PQ4R ຮ່ວມກັບເທັກນິກແຜນທີ່ຄວາມຄິດ. (ວິທະຍານິພົນລະດັບ ປະລິນຍາໂທ). ມະຫາວິທະຍາໄລສີນາຄະລິນທະວິໂລດ.

Armos.R., (2016), Examining Effectiveness of CIRC to improve Reading Comprehension. Kenya. Social Sciense Journal. Vo.209.

Costa, S.R. (1994).“Limited Reading Proficient Students in Two Types of Cooperative Learning Groups for Reading Instruction”, Dissertation Abstract International. 55 (May), 34-60.

Cresswell, J. W. (2012). Educational Research 4th Ed. Pearson Educational Inc. New Jersey.

David, R. (1981). Schemeta the building blocks of in Comprehension and Teaching Research Review. New York: International Reading Association.

Gray, C. W. (2004). Student Perception of Web-based Technologies, Principles of Good Practice, and Multiple Intelligences. Dissertation Abstracts International. 65 (03): 904- A: September.

Gay, L.R., et al. 2006. Educational Research Competence for Analysis and Applications: Eighth Edition. Columbus Ohio. Pearson Merril Prentive Hall.

Harris, A.J. & Sipay E R. (1979). How to teach reading. New York.

Johnson, D.W and Johnson, R.T. (1982). Learning together and alone: Cooperative and Individualistic. New Jersey: Allyn and Bacon A Paramount Communication Company.

Scott, M. M. (1970). Every Employer a Manager: More Meaningful Work Through Job Enveronment. New York: Mc Mraw-Hill Book Company.

Skinner, Q. R. (1975). learning theory. New York: Holt Rinehart and Winston.

Slavin, R.T (1995). Cooperative Learning Theory, Research and Practice. Boston: Allyn and Bacon.

Williams, E. (1994). Reading in the Language Classroom. London: Macmila